# ສະບາຍດີປີໃໝ່

## ຄສ 2021 / ພສ 2564 ປີ ຊວດ

## Happy New Year 2021




ພິມສະບັບທີ 12, ປີທີ 12

## ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ

ເລກທີອະນຸຍາດພິມ: 001ພຈ19102020

**ເອກະສານອ້າງອີງ: ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 130 ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ**

ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນ ການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ຢ່າງເປັນປົກກະຕິ ເປັນເວລາຫຼາຍກວ່າ ຊາວປີ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ໂດຍບໍ່ມີເອກະສານໃດຢັ້ງຢືນການໄດ້ມາທີ່ດິນນັ້ນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍໄດ້ຮັບການແກ້ໄຂແລ້ວ.

ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ ລັດ ຮັບຮູ້ ແລະ ປົກປ້ອງສິດນຳໃຊ້ທີ່ດິນຕາມປະເພນີຂອງຜູ້ກ່ຽວ ແລະ ດຳເນີນການຂຶ້ນທະບຽນອອກໃບຕາດິນໃຫ້ຕາມກົດໝາຍ.

ສະຫະພາບ ເອີຣົບ European Union
Brot für die Welt
MRLG MEKONG REGION LAND GOVERNANCE
NAFRI
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
JVC Japan International Volunteer Center
ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ LIFE
HELVETAS LAOS
WWF
ສະມາຄົມອະນຸລັກຊີວະນາໆພັນລາວ Lao Biodiversity Association

## ຜະລິດໂດຍ:

## ສະໜັບສະໜູນໂດຍ ພາກລັດ:

## ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາ:

## ເບີໂທສາຍດ່ວນ:

| | | |
|---|---|---|
| 1514 | : | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| 021 263 577 | : | ຫ້ອງການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| 030 563 2639 | : | ຂ່າວສານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| 156 | : | ສະພາແຫ່ງຊາດ |
| 1516 | : | ລັດຖະບານ |
| 1362 | : | ສູນໃຫ້ຄຳປຶກສາຂອງສະຫະພັນແມ່ຍິງລາວ |
| 021 213 003 | : | ຂາວສານແຮງງານ ແລະ ສະຫວັດດີການສັງຄົມ |
| 021 353 953 | : | ສະພາທະນາຍຄວາມແຫ່ງ ສປປ ລາວ |
| 021 486 015 | : | ສູນບໍລິການກົດໝາຍເພື່ອປະຊາຊົນ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |



# ການຂຶ້ນທະບຽນອອກໃບຕາດິນ




## ປີ ຊວດ — 1 — ມັງກອນ January 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | | | 1 ຮ.3ຄ.ດ2 | 2 ຮ.4ຄ.ດ2 |
| 3 ຮ.5ຄ.ດ2 | 4 ຮ.6ຄ.ດ2 | 5 ຮ.7ຄ.ດ2 | 6 ຮ.8ຄ.ດ2 | 7 ຮ.9ຄ.ດ2 | 8 ຮ.10ຄ.ດ2 | 9 ຮ.11ຄ.ດ2 |
| 10 ຮ.12ຄ.ດ2 | 11 ຮ.13ຄ.ດ2 | 12 ຮ.14ຄ.ດ2 | 13 ຮ.15ຄ.ດ2 | 14 ຂ.1ຄ.ດ3 | 15 ຂ.2ຄ.ດ3 | 16 ຂ.3ຄ.ດ3 |
| 17 ຂ.4ຄ.ດ3 | 18 ຂ.5ຄ.ດ3 | 19 ຂ.6ຄ.ດ3 | 20 ຂ.7ຄ.ດ3 | 21 ຂ.8ຄ.ດ3 | 22 ຂ.9ຄ.ດ3 | 23 ຂ.10ຄ.ດ3 |
| 24 ຂ.11ຄ.ດ3 | 25 ຂ.12ຄ.ດ3 | 26 ຂ.13ຄ.ດ3 | 27 ຂ.14ຄ.ດ3 | 28 ຂ.15ຄ.ດ3 | 29 ຮ.1ຄ.ດ3 | 30 ຮ.2ຄ.ດ3 |
| 31 ຮ.3ຄ.ດ3 | | | | | | |

1 ວັນປີໃໝ່ສາກົນ
20 ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ
28 ວັນບຸນມາຄະບູຊາ
- ວັນບຸນນະມັດສະການພະທາດສີໂຄດຕະບອງ
- ວັນບຸນນະມັດສະການຜາສາດຫີນວັດພູຈຳປາສັກ

## ປີ ຊວດ — 2 — ກຸມພາ February 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | 1 ຮ.4ຄ.ດ3 | 2 ຮ.5ຄ.ດ3 | 3 ຮ.6ຄ.ດ3 | 4 ຮ.7ຄ.ດ3 | 5 ຮ.8ຄ.ດ3 | 6 ຮ.9ຄ.ດ3 |
| 7 ຮ.10ຄ.ດ3 | 8 ຮ.11ຄ.ດ3 | 9 ຮ.12ຄ.ດ3 | 10 ຮ.13ຄ.ດ3 | 11 ຮ.14ຄ.ດ3 | 12 ຂ.1ຄ.ດ4 | 13 ຂ.2ຄ.ດ4 |
| 14 ຂ.3ຄ.ດ4 | 15 ຂ.4ຄ.ດ4 | 16 ຂ.5ຄ.ດ4 | 17 ຂ.6ຄ.ດ4 | 18 ຂ.7ຄ.ດ4 | 19 ຂ.8ຄ.ດ4 | 20 ຂ.9ຄ.ດ4 |
| 21 ຂ.10ຄ.ດ4 | 22 ຂ.11ຄ.ດ4 | 23 ຂ.12ຄ.ດ4 | 24 ຂ.13ຄ.ດ4 | 25 ຂ.14ຄ.ດ4 | 26 ຂ.15ຄ.ດ4 | 27 ຮ.1ຄ.ດ4 |
| 28 ຮ.2ຄ.ດ4 | | | | | | |

1 ວັນສ້າງຕັ້ງສະຫະພັນກຳມະບານລາວ

**ເອກະສານອ້າງອີງ: ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 99 (ປັບປຸງ) ໃບຕາດິນ**

ໃບຕາດິນ ແມ່ນ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດນຳໃຊ້ທີ່ດິນ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກໃບທະບຽນທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ພຽງໃບດຽວນຳໃຊ້ເປັນຫຼັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ໃບຕາດິນ ມີ ສອງແບບ ຄື ໃບຕາດິນລັດ ແລະ ໃບຕາດິນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳນົດເນື້ອໃນລະອຽດແບບພິມໃບຕາດິນ.

**ມາດຕາ 100 (ປັບປຸງ) ເອກະສານປະກອບການຂຶ້ນທະບຽນອອກໃບຕາດິນ**

ການຂຶ້ນທະບຽນອອກໃບຕາດິນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຢັ້ງຢືນກ່ຽວກັບການໄດ້ມາຂອງສິດນຳໃຊ້ທີ່ດິນ ເປັນຕົ້ນ ການມອບຂອງລັດ, ສັນຍາມອບໂອນ, ຍົກຊັບ, ຊື້ ຂາຍ, ການສືບທອດມູນມໍຣະດົກ,ໃບແຜນທີ່ດິນ, ໃບຢັ້ງຢືນການພັດທະນາທີ່ດິນ, ໃບຢັ້ງຢືນຮັບປະກັນທີ່ດິນ;
2. ສຳເນົາບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ, ຖ້າແມ່ນນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ຕ້ອງມີສຳເນົາໃບອະນຸຍາດດຳເນີນທຸລະກິດ,ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງອົງການຈັດຕັ້ງສັງຄົມ;
3. ໃບແຈ້ງເສຍຄ່າທຳນຽມການນຳໃຊ້ທີ່ດິນ.

**ມາດຕາ 101 (ປັບປຸງ) ຂັ້ນຕອນການຂຶ້ນທະບຽນອອກໃບຕາດິນ**

ການຂຶ້ນທະບຽນອອກໃບຕາດິນ ໃຫ້ດຳເນີນຜ່ານໜ່ວຍງານບໍລິການປະຕູດຽວ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານທີ່ກ່ຽວຂ້ອງ ດຳເນີນການສອບຖາມ ແລະ ເກັບກຳຂໍ້ມູນການໄດ້ມາຂອງສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ, ສຳຫຼວດວັດແທກ ໂດຍມີການເຂົ້າຮ່ວມ ແລະ ການຢັ້ງຢືນຂອງ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຈາກເຈົ້າຂອງສິດນຳໃຊ້ທີ່ດິນ ພ້ອມທັງສ້າງແຜນທີ່ດິນສະເພາະຕອນ ແລະ ປະກອບສຳນວນເອກະສານການຂຶ້ນທະບຽນອອກໃບຕາດິນ ໃຫ້ສຳເລັດ ພາຍໃນເວລາ ສິບຫ້າວັນ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ອອກແຈ້ງການຜ່ານສື່ມວນຊົນ ແລະ ຕິດປະກາດຫາຜູ້ຄັດຄ້ານ ຢູ່ຫ້ອງການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່, ກຳນົດເວລາຂອງແຈ້ງການນັ້ນ ແມ່ນ ສາມສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຕ້ອງຂຶ້ນທະບຽນອອກໃບຕາດິນ ພາຍໃນເວລາ ຫ້າວັນ ລັດຖະການ ຫຼັງຈາກສິ້ນສຸດກຳນົດເວລາດັ່ງກ່າວ ຫາກບໍ່ມີຜູ້ຄັດຄ້ານ ຫຼື ມີການຄັດຄ້ານ ແຕ່ໄດ້ຮັບການແກ້ໄຂແລ້ວ;
4. ໃນກໍລະນີທີ່ຕອນດິນໃດໜຶ່ງ ຫາກມີຜູ້ຄັດຄ້ານ, ມີຂໍ້ຂັດແຍ່ງ ຫຼື ຕິດຄ້າງດ້ວຍເຫດຜົນໃດໜຶ່ງ ຕ້ອງໄດ້ຮັບການແກ້ໄຂໃຫ້ສຳເລັດຕາມກົດໝາຍ ຈາກນັ້ນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຈຶ່ງຂຶ້ນທະບຽນອອກໃບຕາດິນຕອນດັ່ງກ່າວ.

ພາຍຫຼັງສຳເລັດການຂຶ້ນທະບຽນອອກໃບຕາດິນແຕ່ລະຕອນແລ້ວ ໃຫ້ລາຍງານຕໍ່ອົງການປົກຄອງຂັ້ນເມືອງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ບ່ອນທີ່ດິນຕັ້ງຢູ່.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ອອກລະບຽບການກ່ຽວກັບຂັ້ນຕອນການຂຶ້ນທະບຽນອອກໃບຕາດິນ.

# ການມີສ່ວນຮ່ວມຂອງປະຊາຊົນໃນການໃຫ້ເຊົ່າ ແລະ ສຳປະທານທີ່ດິນ




## ປີ ຊວດ — 3 — ມີນາ March 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | 1 ຂ.3ຄດ4 | 2 ຂ.4ຄດ4 | 3 ຂ.5ຄດ4 | 4 ຂ.6ຄດ4 | 5 ຂ.7ຄດ4 | 6 ຂ.8ຄດ4 |
| 7 ຂ.9ຄດ4 | 8 ຂ.10ຄດ4 | 9 ຂ.11ຄດ4 | 10 ຂ.12ຄດ4 | 11 ຂ.13ຄດ4 | 12 ຂ.14ຄດ4 | 13 ຂ.15ຄດ4 |
| 14 ຮ.1ຄດ5 | 15 ຮ.2ຄດ5 | 16 ຮ.3ຄດ5 | 17 ຮ.4ຄດ5 | 18 ຮ.5ຄດ5 | 19 ຮ.6ຄດ5 | 20 ຮ.7ຄດ5 |
| 21 ຮ.8ຄດ5 | 22 ຮ.9ຄດ5 | 23 ຮ.10ຄດ5 | 24 ຮ.11ຄດ5 | 25 ຮ.12ຄດ5 | 26 ຮ.13ຄດ5 | 27 ຮ.14ຄດ5 |
| 28 ຮ.15ຄດ5 | 29 ຂ.1ຄດ5 | 30 ຂ.2ຄດ5 | 31 ຂ.3ຄດ5 | | | |

8 ວັນແມ່ຍິງສາກົນ
22 ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ
- ວັນນ້ຳໂລກ

## ປີ ຊວດ-ສະຫຼູ — 4 — ເມສາ April

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | | 1 ຂ.4ຄດ5 | 2 ຂ.5ຄດ5 | 3 ຂ.6ຄດ5 |
| 4 ຂ.7ຄດ5 | 5 ຂ.8ຄດ5 | 6 ຂ.9ຄດ5 | 7 ຂ.10ຄດ5 | 8 ຂ.11ຄດ5 | 9 ຂ.12ຄດ5 | 10 ຂ.13ຄດ5 |
| 11 ຂ.14ຄດ5 | 12 ຮ.1ຄດ6 | 13 ຮ.2ຄດ6 | 14 ຮ.3ຄດ6 | 15 ຮ.4ຄດ6 | 16 ຮ.5ຄດ6 | 17 ຮ.6ຄດ6 |
| 18 ຮ.7ຄດ6 | 19 ຮ.8ຄດ6 | 20 ຮ.9ຄດ6 | 21 ຮ.10ຄດ6 | 22 ຮ.11ຄດ6 | 23 ຮ.12ຄດ6 | 24 ຮ.13ຄດ6 |
| 25 ຮ.14ຄດ6 | 26 ຮ.15ຄດ6 | 27 ຂ.1ຄດ6 | 28 ຂ.2ຄດ6 | 29 ຂ.3ຄດ6 | 30 ຂ.4ຄດ6 | |

13 ວັນສັງຂານລ່ວງ
14 ວັນເນົາ
- ວັນສ້າງຕັ້ງອົງການຈັດຕັ້ງຊາວໜຸ່ມ ປປລ
15 ວັນເນົາ
16 ວັນສັງຂານຂຶ້ນປີໃໝ່ລາວ
26 ວັນວິສາຂະບູຊາ
27 ວັນປູ່ກຸ້ນ ພສ 2564

**ເອກະສານອ້າງອີງ: ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ສະບັບເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019**

**3.ການອະທິບາຍຄຳສັບ (ຂໍ້ 18, 19)**

1. ການເຊົ່າທີ່ດິນຈາກພົນລະເມືອງລາວ: ການເຊົ່າທີ່ດິນຈາກພົນລະເມືອງລາວ ໝາຍເຖິງ ການເຮັດສັນຍາເຊົ່າທີ່ດິນລະຫວ່າງຜູ້ລົງທຶນກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງຂອງພົນລະເມືອງລາວ.
2. ການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ: ການເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ໝາຍເຖິງການເຮັດສັນຍາເຊົ່າ ຫຼື ສຳປະທານ ທີ່ດິນລັດ.

**4. ການມີສ່ວນຮ່ວມຂອງປະຊາຊົນ**

- ສາມາດເຂົ້າຮ່ວມ ຫຼື ມີຄຳເຫັນ ໃນຂະບວນການສຶກສາຄວາມເປັນໄປໄດ້ຂອງໂຄງການ ກັບຜູ້ລົງທຶນ ແລະ ອຳນາດການປົກຄອງທ້ອງຖິ່ນ;
- ໄດ້ຮັບຂໍ້ມູນເປັນສຳເນົາເອກະສານ ທີ່ກ່ຽວຂ້ອງກັບຕົນ ຈາກເຈົ້າຂອງໂຄງການ ໃນການດຳເນີນງານຂອງບໍລິສັດລົງທຶນ ລວມທັງຜົນໄດ້ຜົນເສຍ ຢ່າງຄົບຖ້ວນ;
- ສົນທະນາພາຍໃນຊຸມຊົນ ລວມທັງບົດບາດຍິງ-ຊາຍ ໂດຍມີຂໍ້ມູນ, ແຜນທີ່, ແຜ່ນພັບ, ໂປດສເຕີ ຫຼື ວິດີໂອ ເພື່ອໃຫ້ເຂົ້າໃຈ ເຖິງຄວາມເປັນໄປໄດ້ ແລະ ຜົນກະທົບ;
- ເຈລະຈາກັບຜູ້ລົງທຶນ ເພື່ອຮັບປະກັນຜົນປະໂຫຍດຊຸມຊົນ ບົນພື້ນຖານຄວາມສະໝັກໃຈ;
- ຊອກຫາຄຳແນະນຳຈາກພາຍນອກ ກ່ຽວກັບດ້ານກົດໝາຍ ແລະ ດ້ານວິຊາການ ເພື່ອຊ່ວຍໃນການຕັດສິນໃຈ ແລະ ການຕໍ່ລອງຕ່າງໆ;
- ມີການຕັດສິນໃຈ ແລະ ມີຄວາມເອກະພາບຂອງຊຸມຊົນທັງໝົດ ໂດຍອີງໃສ່ສຽງສ່ວນຫຼາຍ ແລະ ບັນທຶກເປັນລາຍລັກອັກສອນ ແລະ ຖືກຕ້ອງທາງດ້ານກົດໝາຍ;
- ສື່ສານກັບຜູ້ລົງທຶນຢ່າງຕໍ່ເນື່ອງ ໃນແຕ່ລະໄລຍະຂອງໂຄງການ, ຕິດຕາມ ແລະ ລາຍງານສະພາບການດຳເນີນທຸລະກິດໃຫ້ອຳນາດການປົກຄອງຂອງຕົນຊາບ.

**ເອກະສານອ້າງອີງ: ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019**
**ມາດຕາ 56 (ຂໍ້ 1, 5, 6) ສິດຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ**

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນຂ່າວສານກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ;
2. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
3. ສະເໜີຕໍ່ເຈົ້າຂອງໂຄງການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳ.

# ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ




## ປີ ສະຫຼູ 5 ພຶດສະພາ May 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | | | | 1<br>ຮ 5 ຄ ດ 6 |
| 2<br>ຮ 6 ຄ ດ 6 | 3<br>ຮ 7 ຄ ດ 6 | 4<br>ຮ 8 ຄ ດ 6 | 5<br>ຮ 9 ຄ ດ 6 | 6<br>ຮ 10 ຄ ດ 6 | 7<br>ຮ 11 ຄ ດ 6 | 8<br>ຮ 12 ຄ ດ 6 |
| 9<br>ຮ 13 ຄ ດ 6 | 10<br>ຮ 14 ຄ ດ 6 | 11<br>ຮ 15 ຄ ດ 6 | 12<br>ຂ 1 ຄ ດ 7 | 13<br>ຂ 2 ຄ ດ 7 | 14<br>ຂ 3 ຄ ດ 7 | 15<br>ຂ 4 ຄ ດ 7 |
| 16<br>ຂ 5 ຄ ດ 7 | 17<br>ຂ 6 ຄ ດ 7 | 18<br>ຂ 7 ຄ ດ 7 | 19<br>ຂ 8 ຄ ດ 7 | 20<br>ຂ 9 ຄ ດ 7 | 21<br>ຂ 10 ຄ ດ 7 | 22<br>ຂ 11 ຄ ດ 7 |
| 23<br>ຂ 12 ຄ ດ 7 | 24<br>ຂ 13 ຄ ດ 7 | 25<br>ຂ 14 ຄ ດ 7 | 26<br>ຂ 15 ຄ ດ 7 | 27<br>ຮ 1 ຄ ດ 7 | 28<br>ຮ 2 ຄ ດ 7 | 29<br>ຮ 3 ຄ ດ 7 |
| 30<br>ຮ 4 ຄ ດ 7 | 31<br>ຮ 5 ຄ ດ 7 | | | | | |

1 ວັນກຳມະກອນສາກົນ

## ປີ ສະຫຼູ 6 ມິຖຸນາ June 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | 1<br>ຮ 6 ຄ ດ 7 | 2<br>ຮ 7 ຄ ດ 7 | 3<br>ຮ 8 ຄ ດ 7 | 4<br>ຮ 9 ຄ ດ 7 | 5<br>ຮ 10 ຄ ດ 7 |
| 6<br>ຮ 11 ຄ ດ 7 | 7<br>ຮ 12 ຄ ດ 7 | 8<br>ຮ 13 ຄ ດ 7 | 9<br>ຮ 14 ຄ ດ 7 | 10<br>ຂ 1 ຄ ດ 8 | 11<br>ຂ 2 ຄ ດ 8 | 12<br>ຂ 3 ຄ ດ 8 |
| 13<br>ຂ 4 ຄ ດ 8 | 14<br>ຂ 5 ຄ ດ 8 | 15<br>ຂ 6 ຄ ດ 8 | 16<br>ຂ 7 ຄ ດ 8 | 17<br>ຂ 8 ຄ ດ 8 | 18<br>ຂ 9 ຄ ດ 8 | 19<br>ຂ 10 ຄ ດ 8 |
| 20<br>ຂ 11 ຄ ດ 8 | 21<br>ຂ 12 ຄ ດ 8 | 22<br>ຂ 13 ຄ ດ 8 | 23<br>ຂ 14 ຄ ດ 8 | 24<br>ຂ 15 ຄ ດ 8 | 25<br>ຮ 1 ຄ ດ 8 | 26<br>ຮ 2 ຄ ດ 8 |
| 27<br>ຮ 3 ຄ ດ 8 | 28<br>ຮ 4 ຄ ດ 8 | 29<br>ຮ 5 ຄ ດ 8 | 30<br>ຮ 6 ຄ ດ 8 | | | |

1 ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ
5 ວັນສິ່ງແວດລ້ອມໂລກ
24 ວັນບຸນເຂົ້າພັນສາ

**ເອກະສານອ້າງອີງ: ກົດໝາຍ ວ່າດ້ວຍທີ່ດິນ, ເລກທີ 07/ສພຊ, ລົງວັນທີ 21 ມິຖຸນາ 2019**

**ມາດຕາ 161 (ປັບປຸງ) ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ**

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນແມ່ນ ການແກ້ໄຂບັນຫາກ່ຽວກັບການນຳໃຊ້ທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງທີ່ໄດ້ຮັບມອບ, ບໍ່ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ເຂດແດນ ແລະ ບັນຫາທີ່ດິນອື່ນທີ່ມີລັກສະນະບໍລິຫານຕາມກົດໝາຍ.

ບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນເກີດຂຶ້ນຢູ່ທ້ອງຖິ່ນໃດ ຫຼື ຂະແໜງການໃດ ແມ່ນໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຮ່ວມກັບຂະແໜງການທີ່ຄຸ້ມຄອງການນຳໃຊ້ທີ່ດິນນັ້ນ ເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກ່ອນ ໂດຍໃຫ້ເກັບຂໍ້ມູນຢ່າງລະອຽດ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານບ່ອນທີ່ດິນນັ້ນຕັ້ງຢູ່ ແລ້ວສະເໜີໃຫ້ອົງການປົກຄອງຂັ້ນເມືອງ ເປັນຜູ້ຕົກລົງຕາມກົດໝາຍ.

ໃນກໍລະນີຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈຕໍ່ການຕົກລົງແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນດັ່ງກ່າວ ກໍມີສິດສະເໜີໃຫ້ອົງການປົກຄອງຂັ້ນແຂວງເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂບັນຫາດັ່ງກ່າວຕາມກົດໝາຍ ໂດຍໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນໃຈກາງສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ຖ້າຝ່າຍໃດຝ່າຍໜຶ່ງ ຫາກຍັງບໍ່ພໍໃຈຕໍ່ການຕົກລົງແກ້ໄຂນັ້ນ ອົງການປົກຄອງຂັ້ນແຂວງ ຕ້ອງແຈ້ງໃຫ້ຄູ່ກໍລະນີເປັນລາຍລັກອັກສອນ ນຳບັນຫາດັ່ງກ່າວໄປຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 162 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ການຮ້ອງຟ້ອງຕໍ່ສານ;
4. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 163 (ໃໝ່) ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີ ສາມາດເຈລະຈາດ້ວຍການປະນີປະນອມ ຫຼື ໄກ່ເກ່ຍກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 164 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ພົວພັນກັບການດຳເນີນທຸລະກິດ, ຄູ່ກໍລະນີສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ.

**ມາດຕາ 165 (ປັບປຸງ) ການຮ້ອງຟ້ອງຕໍ່ສານ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 166 (ປັບປຸງ) ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ເອກະສານອ້າງອີງ: ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ເລກທີ 023/ສພຊ ລົງວັນທີ 09 ພະຈິກ 2016

**ມາດຕາ 2 (ປັບປຸງ) ຄຳຮ້ອງທຸກ**

ຄຳຮ້ອງທຸກ ແມ່ນເອກະສານ ຂອງພົນລະເມືອງ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳຂອງບຸກຄົນ ຫຼື ຄຳຕົກລົງຂອງການຈັດຕັ້ງໃດໜຶ່ງທີ່ຕົນເຫັນວ່າ ເປັນການລະເມີດກົດໝາຍ, ບໍ່ໄດ້ຮັບຄວາມຍຸຕິທຳ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ຄຳຮ້ອງທຸກ ມີ ສາມ ປະເພດ ຄື: ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ.

1. ຄຳສະເໜີ ແມ່ນເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ;
2. ຄຳຮ້ອງຟ້ອງ ແມ່ນເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
3. ຄຳຮ້ອງຂໍຄວາມເປັນທຳ ແມ່ນເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ຄະນະປະຈຳສະພາຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 7 (ປັບປຸງ) (ວັກທີ 1) ສິດ, ພັນທະຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງທຸກ ຕໍ່ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

ເອກະສານອ້າງອີງ: ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ສະບັບເລກທີ 404/ກຍ, ລົງວັນທີ 28 ເມສາ 2016

**ມາດຕາ 2 ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ແມ່ນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນພາຍໃນບ້ານ ດ້ວຍການປະນີປະນອມ ໂດຍຄະນະແກ້ໄຂຂໍ້ຂັດແຍ່ງ ແນໃສ່ເຮັດໃຫ້ຄູ່ກໍລະນີ ມີຄວາມຮູ້ສຶກຕື່ນຕົວ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ດ້ວຍຄວາມສະໝັກໃຈ.

ກຊສ MONRE LIWG ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ JVC Japan International Volunteer Center LIFE HELVETAS LAOS CDEA WWF NAFRI Brot für die Welt European Union MRLG OXFAM The Lutheran World Federation CCL World Renew CIVITAS Cord ADRA

# ການປົກປັກຮັກສາປ່າສະຫງວນ ແລະ ການວາງແຜນຈັດສັນປ່າໄມ້ແບບມີສ່ວນຮ່ວມຂອງປະຊາຊົນ




## ປີ ສະຫຼູ 7 ກໍລະກົດ July 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | | 1<br>ຮ. 7 ຄ ດ 8 | 2<br>ຮ. 8 ຄ ດ 8 | 3<br>ຮ. 9 ຄ ດ 8 |
| 4<br>ຮ. 10 ຄ ດ 8 | 5<br>ຮ. 11 ຄ ດ 8 | 6<br>ຮ. 12 ຄ ດ 8 | 7<br>ຮ. 13 ຄ ດ 8 | 8<br>ຮ. 14 ຄ ດ 8 | 9<br>ຮ. 15 ຄ ດ 8 | 10<br>ຂ. 1 ຄ ດ 9 |
| 11<br>ຂ. 2 ຄ ດ 9 | 12<br>ຂ. 3 ຄ ດ 9 | 13<br>ຂ. 4 ຄ ດ 9 | 14<br>ຂ. 5 ຄ ດ 9 | 15<br>ຂ. 6 ຄ ດ 9 | 16<br>ຂ. 7 ຄ ດ 9 | 17<br>ຂ. 8 ຄ ດ 9 |
| 18<br>ຂ. 9 ຄ ດ 9 | 19<br>ຂ. 10 ຄ ດ 9 | 20<br>ຂ. 11 ຄ ດ 9 | 21<br>ຂ. 12 ຄ ດ 9 | 22<br>ຂ. 13 ຄ ດ 9 | 23<br>ຂ. 14 ຄ ດ 9 | 24<br>ຂ. 15 ຄ ດ 9 |
| 25<br>ຮ. 1 ຄ ດ 9 | 26<br>ຮ. 2 ຄ ດ 9 | 27<br>ຮ. 3 ຄ ດ 9 | 28<br>ຮ. 4 ຄ ດ 9 | 29<br>ຮ. 5 ຄ ດ 9 | 30<br>ຮ. 6 ຄ ດ 9 | 31<br>ຮ. 7 ຄ ດ 9 |

13 ວັນຄ້າຍວັນເກີດ ທ່ານປະທານ ສຸພານຸວົງ
- ວັນປ່ອຍປາ ແລະ ອານຸລັກສັດນ້ຳ - ສັດປ່າແຫ່ງຊາດ
20 ວັນສ້າງຕັ້ງສະຫະພັນແມ່ຍິງລາວ

## ປີ ສະຫຼູ 8 ສິງຫາ August 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| 1<br>ຮ. 8 ຄ ດ 9 | 2<br>ຮ. 9 ຄ ດ 9 | 3<br>ຮ. 10 ຄ ດ 9 | 4<br>ຮ. 11 ຄ ດ 9 | 5<br>ຮ. 12 ຄ ດ 9 | 6<br>ຮ. 13 ຄ ດ 9 | 7<br>ຮ. 14 ຄ ດ 9 |
| 8<br>ຂ. 1 ຄ ດ 10 | 9<br>ຂ. 2 ຄ ດ 10 | 10<br>ຂ. 3 ຄ ດ 10 | 11<br>ຂ. 4 ຄ ດ 10 | 12<br>ຂ. 5 ຄ ດ 10 | 13<br>ຂ. 6 ຄ ດ 10 | 14<br>ຂ. 7 ຄ ດ 10 |
| 15<br>ຂ. 8 ຄ ດ 10 | 16<br>ຂ. 9 ຄ ດ 10 | 17<br>ຂ. 10 ຄ ດ 10 | 18<br>ຂ. 11 ຄ ດ 10 | 19<br>ຂ. 12 ຄ ດ 10 | 20<br>ຂ. 13 ຄ ດ 10 | 21<br>ຂ. 14 ຄ ດ 10 |
| 22<br>ຂ. 15 ຄ ດ 10 | 23<br>ຮ. 1 ຄ ດ 10 | 24<br>ຮ. 2 ຄ ດ 10 | 25<br>ຮ. 3 ຄ ດ 10 | 26<br>ຮ. 4 ຄ ດ 10 | 27<br>ຮ. 5 ຄ ດ 10 | 28<br>ຮ. 6 ຄ ດ 10 |
| 29<br>ຮ. 7 ຄ ດ 10 | 30<br>ຮ. 8 ຄ ດ 10 | 31<br>ຮ. 9 ຄ ດ 10 | | | | |

7 ວັນບຸນຫໍ່ເຂົ້າປະດັບດິນ
- ວັນບຸນຊ່ວງເຮືອແຂວງຫຼວງພະບາງ
13 ວັນສື່ມວນຊົນແຫ່ງຊາດ ແລະ ການພິມຈໍາໜ່າຍ
15 ວັນລັດຖະທໍາມະນູນແຫ່ງຊາດ
22 ວັນບຸນຫໍ່ເຂົ້າສະຫຼາກ
23 ວັນຍຶດອໍານາດທົ່ວປະເທດ

**ເອກະສານອ້າງອີງ: ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 255/ປປທ, ລົງວັນທີ 25 ກໍລະກົດ 2019**

### ມາດຕາ 16 (ປັບປຸງ) ປ່າສະຫງວນ

ປ່າສະຫງວນ ແມ່ນປ່າໄມ້ທີ່ໄດ້ກໍານົດເພື່ອຈຸດປະສົງນໍາໃຊ້ໃນການອະນຸລັກທໍາມະຊາດ, ປົກປັກຮັກສາ ແລະ ຂະຫຍາຍ ພັນພືດ, ພັນສັດນ້ຳ ແລະ ສັດປ່າ ນາໆຊະນິດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານທໍາມະຊາດ, ປະຫວັດສາດ, ວັດທະນະທໍາ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.

ປ່າສະຫງວນ ປະກອບດ້ວຍ ປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ ຊຶ່ງໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ປ່າສະຫງວນ ທີ່ມີຄວາມອຸດົມສົມບູນທາງດ້ານລະບົບນິເວດ ແລະ ມີເອກະລັກສະເພາະທາງດ້ານທິວທັດທໍາມະຊາດ ແລະ ມີຄວາມໂດດເດັ່ນໃນລະດັບຊາດ, ພາກພື້ນ ແລະ ລະດັບໂລກ ອາດຈະສະເໜີເປັນເຂດອະນຸລັກພັນສັດປ່າ, ເຂດອຸທິຍານແຫ່ງຊາດ, ມໍລະດົກພາກພື້ນ ຫລື ມໍລະດົກໂລກ.

### ມາດຕາ 48 (ປັບປຸງ) ການປົກປັກຮັກສາປ່າສະຫງວນ

ການປົກປັກຮັກສາປ່າສະຫງວນ ແມ່ນ ການຮັກສາປ່າໄມ້ ໃຫ້ອຸດົມສົມບູນ ກໍ່ຄືປົກປັກຮັກສາພັນພືດ, ພັນສັດ, ຊີວະນາໆພັນ, ລະບົບນິເວດທີ່ມີຄຸນຄ່າທາງດ້ານ ທໍາມະຊາດ, ປະຫວັດສາດ, ວັດທະນະທໍາ ໃຫ້ດໍາລົງຄົງຕົວ ແລະ ຂະຫຍາຍຕົວ ພ້ອມກັນນັ້ນ ກໍໃຫ້ມີປ່າໄມ້, ທິວທັດທໍາມະຊາດ ທີ່ສວຍສົດງົດງາມ ເພື່ອການພັດທະນາສວນອຸທິຍານແຫ່ງຊາດ ຊຶ່ງເໝາະສົມຕໍ່ ການທ່ອງທ່ຽວ ແລະ ການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ.

### ມາດຕາ 17 (ປັບປຸງ) ປ່າຜະລິດ

ປ່າຜະລິດ ແມ່ນ ປ່າໄມ້ທໍາມະຊາດ ແລະ ປ່າປູກ ທີ່ໄດ້ກໍານົດ ເປັນເຂດສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

### ມາດຕາ 22 (ປັບປຸງ) ການວາງແຜນຈັດສັນປ່າໄມ້

ການວາງແຜນຈັດສັນປ່າໄມ້ ແມ່ນ ການກໍານົດແຜນພັດທະນາປ່າໄມ້ ຕາມການແບ່ງເຂດປະເພດປ່າໄມ້ ຄື ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໂດຍອີງໃສ່ຂໍ້ມູນການສໍາຫຼວດຕົວຈິງ ແນໃສ່ຮັບປະກັນຄວາມສົມດູນ ຂອງລະບົບນິເວດປ່າໄມ້, ການນໍາໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ແບບບໍ່ບົກແຫ້ງ, ການມີສ່ວນຮ່ວມຂອງປະຊາຊົນ ໃນການຄຸ້ມຄອງປ່າໄມ້ຕາມແຜນຈັດສັນ ທີ່ລັດໄດ້ກໍານົດ.

ການວາງແຜນຈັດສັນປ່າປ້ອງກັນ ແມ່ນ ການກໍານົດພື້ນທີ່ ເປັນເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນໍາໃຊ້ ໃນທີ່ດິນປ່າປ້ອງກັນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້.

ການວາງແຜນຈັດສັນປ່າສະຫງວນ ແມ່ນ ການກໍານົດພື້ນທີ່ ເປັນເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນໍາໃຊ້ ແລະ ເຂດກັນຊົນ ໃນທີ່ດິນປ່າສະຫງວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້.

ການວາງແຜນຈັດສັນປ່າຜະລິດ ແມ່ນ ການກໍານົດພື້ນທີ່ ເປັນເຂດທີ່ສາມາດຂຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.

ສໍາລັບບ້ານ ທີ່ຢູ່ໃນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕ້ອງດໍາເນີນການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້.

# ການປົກປັກຮັກສາ ແລະ ນຳໃຊ້ເຄື່ອງປ່າຂອງດົງໃຫ້ຍືນຍົງ




## ປີ ສະຫຼູ 9 ກັນຍາ September 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | 1<br>ຮ. 10 ຄ ດ 10 | 2<br>ຮ. 11 ຄ ດ 10 | 3<br>ຮ. 12 ຄ ດ 10 | 4<br>ຮ. 13 ຄ ດ 10 |
| 5<br>ຮ. 14 ຄ ດ 10 | 6<br>ຮ. 15 ຄ ດ 10 | 7<br>ຂ. 1 ຄ ດ 11 | 8<br>ຂ. 2 ຄ ດ 11 | 9<br>ຂ. 3 ຄ ດ 11 | 10<br>ຂ. 4 ຄ ດ 11 | 11<br>ຂ. 5 ຄ ດ 11 |
| 12<br>ຂ. 6 ຄ ດ 11 | 13<br>ຂ. 7 ຄ ດ 11 | 14<br>ຂ. 8 ຄ ດ 11 | 15<br>ຂ. 9 ຄ ດ 11 | 16<br>ຂ. 10 ຄ ດ 11 | 17<br>ຂ. 11 ຄ ດ 11 | 18<br>ຂ. 12 ຄ ດ 11 |
| 19<br>ຂ. 13 ຄ ດ 11 | 20<br>ຂ. 14 ຄ ດ 11 | 21<br>ຂ. 15 ຄ ດ 11 | 22<br>ຮ. 1 ຄ ດ 11 | 23<br>ຮ. 2 ຄ ດ 11 | 24<br>ຮ. 3 ຄ ດ 11 | 25<br>ຮ. 4 ຄ ດ 11 |
| 26<br>ຮ. 5 ຄ ດ 11 | 27<br>ຮ. 6 ຄ ດ 11 | 28<br>ຮ. 7 ຄ ດ 11 | 29<br>ຮ. 8 ຄ ດ 11 | 30<br>ຮ. 9 ຄ ດ 11 | | |

21 ວັນບຸນອອກພັນສາ
22 ວັນບຸນຊ່ວງເຮືອນະຄອນຫຼວງວຽງຈັນ

## ປີ ສະຫຼູ 10 ຕຸລາ October 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | | | 1<br>ຮ. 10 ຄ ດ 11 | 2<br>ຮ. 11 ຄ ດ 11 |
| 3<br>ຮ. 12 ຄ ດ 11 | 4<br>ຮ. 13 ຄ ດ 11 | 5<br>ຮ. 14 ຄ ດ 11 | 6<br>ຂ. 1 ຄ ດ 12 | 7<br>ຂ. 2 ຄ ດ 12 | 8<br>ຂ. 3 ຄ ດ 12 | 9<br>ຂ. 4 ຄ ດ 12 |
| 10<br>ຂ. 5 ຄ ດ 12 | 11<br>ຂ. 6 ຄ ດ 12 | 12<br>ຂ. 7 ຄ ດ 12 | 13<br>ຂ. 8 ຄ ດ 12 | 14<br>ຂ. 9 ຄ ດ 12 | 15<br>ຂ. 10 ຄ ດ 12 | 16<br>ຂ. 11 ຄ ດ 12 |
| 17<br>ຂ. 12 ຄ ດ 12 | 18<br>ຂ. 13 ຄ ດ 12 | 19<br>ຂ. 14 ຄ ດ 12 | 20<br>ຂ. 15 ຄ ດ 12 | 21<br>ຮ. 1 ຄ ດ 12 | 22<br>ຮ. 2 ຄ ດ 12 | 23<br>ຮ. 3 ຄ ດ 12 |
| 24<br>ຮ. 4 ຄ ດ 12 | 25<br>ຮ. 5 ຄ ດ 12 | 26<br>ຮ. 6 ຄ ດ 12 | 27<br>ຮ. 7 ຄ ດ 12 | 28<br>ຮ. 8 ຄ ດ 12 | 29<br>ຮ. 9 ຄ ດ 12 | 30<br>ຮ. 10 ຄ ດ 12 |
| 31<br>ຮ. 11 ຄ ດ 12 | | | | | | |

7 ວັນຄູແຫ່ງຊາດ
- ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ
12 ວັນປະກາດເອກະລາດ
20 ວັນບຸນນະມັດສະການພະທາດຫຼວງວຽງຈັນ

**ເອກະສານອ້າງອີງ: ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 255/ປປທ, ລົງວັນທີ 25 ກໍລະກົດ 2019**

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ (ຂໍ້ທີ 17)**

ເຄື່ອງປ່າຂອງດົງ ໝາຍເຖິງ ພືດ ທີ່ເກີດຂຶ້ນຢູ່ຕາມທຳມະຊາດ ຫຼື ປູກຂຶ້ນ ຊຶ່ງລວມມີປະເພດ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງ, ເຫັດ, ນ້ຳເຜີ້ງ ລວມທັງພືດເປັນຢາ ແລະ ອື່ນໆ.

**ມາດຕາ 50 ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ**

ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ ເປັນຕົ້ນ ປະເພດຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ໃນບັນຊີ 1 ທີ່ລັດໄດ້ກຳນົດໄວ້ ເພື່ອເຮັດໃຫ້ມີການຂະຫຍາຍຕົວ ແລະ ມີຄວາມອຸດົມສົມບູນ.

ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດຊະນິດ ພັນໄມ້ ແລະ ເຄື່ອງປ່າຂອງດົງ;
2. ກຳນົດເຂດແຫຼ່ງພັນ, ຂຶ້ນບັນຊີ ແລະ ຈົດທະບຽນພັນໄມ້ ແລະ ເຄື່ອງປ່າຂອງດົງ;
3. ກຳນົດວາງແຜນການອະນຸລັກ, ປົກປັກຮັກສາ ໂດຍມີການເຂົ້າຮ່ວມຂອງປະຊາຊົນທ້ອງຖິ່ນ;
4. ປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະການກ່ຽວກັບການປົກປັກຮັກສາ;
5. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

**ມາດຕາ 61 (ປັບປຸງ) (ວັກທີ 2) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ**

ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້ ແລະ ເຄື່ອງປ່າຂອງດົງ, ສິ່ງແວດລ້ອມ ທຳມະຊາດ ຫຼື ສັງຄົມ.

**ມາດຕາ 62 (ປັບປຸງ) (ວັກທີ 3) ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າໄມ້ຂອງດົງ ເພື່ອສາທາລະນະປະໂຫຍດ**

ສຳລັບການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດປ່າໄມ້ ທີ່ໄດ້ຈັດສັນໃຫ້.

**ມາດຕາ 63 (ປັບປຸງ) (ວັກທີ 4) ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າໄມ້ຂອງດົງ ເພື່ອຄອບຄົວ**

ການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ໃຫ້ເກັບກູ້ໄດ້.

**ມາດຕາ 64 (ປັບປຸງ) ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າໄມ້ຂອງດົງ ຕາມປະເພນີ**

ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ຕາມປະເພນີ ແມ່ນ ການຊົມໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເຄີຍປະຕິບັດກັນມາ ໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນ ແລະ ກົດໝາຍ.

**ມາດຕາ 65 (ປັບປຸງ) (ວັກທີ 3) ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າໄມ້ຂອງດົງ ເພື່ອທຸລະກິດ**

ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າໄມ້ທີ່ລັດຈັດສັນໃຫ້, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ.

**ເອກະສານອ້າງອີງ: ລະບຽບການຄຸ້ມຄອງໄມ້ ແລະ ເຄື່ອງປ່າຂອງດົງ, ເລກທີ 0221/ກປ, ລົງວັນທີ 13 ຕຸລາ 2000.**

**ມາດຕາ 22: ບັນດາຂໍ້ຫ້າມ ການເກັບກູ້ເຄື່ອງປ່າຂອງດົງ**

1. ເກັບກູ້ ເຄື່ອງປ່າຂອງດົງ ໃນແບບລັກສະນະດັບສູນ;
2. ເກັບກູ້ໄມ້ປ່ອງທີ່ມີອາຍຸ ຕ່ຳກວ່າ 3 ປີ ແລະ ຫ້າມຕັດກ້ຽງແບບສົມບູນ;
3. ເກັບກູ້ຫວາຍ ແລະ ປະເພດທີ່ເປັນເຄືອ ດ້ວຍວິທີການຕັດປົ້າຕົ້ນໄມ້ທີ່ເຄືອເກາະກ່ຽວຢູ່;
4. ເກັບກູ້ ປະເພດໃຫ້ໝາກ, ດອກ, ໃບ ດ້ວຍວິທີການຕັດປົ້າຕົ້ນ ເຊັ່ນ: ໝາກຈອງ, ໝາກຂາມແພບ, ດອກເຜີ້ງ ແລະ ອື່ນໆ;
5. ເກັບກູ້ ປະເພດໃຫ້ເປືອກ ດ້ວຍວິທີການປອກອ້ອມຕົ້ນ ເຊັ່ນ: ເປືອກບົງ, ເປືອກເມືອກ;
6. ເກັບກູ້ ປະເພດໃຫ້ນ້ຳມັນ ແລະ ຢາງ ດ້ວຍວິທີເອົາໄຟຈູດ ຫຼື ເອົາທາດເຄມີອື່ນໆໃສ່ ເພື່ອເລັ່ງໃຫ້ນ້ຳມັນ ແລະ ຢາງອອກ ຫຼາຍບາດຖຽວເຮັດໃຫ້ຕົ້ນໄມ້ນັ້ນຕາຍ ເຊັ່ນ: ນ້ຳມັນຢາງ, ຢາງແປກ ແລະ ອື່ນໆ;
7. ເກັບກູ້ປະເພດ ຮາກ, ຫົວ, ຍອດ, ໜໍ່ ໝົດບາດຖຽວໃນເທື່ອດຽວ, ສຸມ ຫຼື ກໍ ເຊັ່ນ: ໜໍ່ໄມ້, ຮາກຕົນທຸ່ງ, ຫົວກະບຸກ ແລະ ອື່ນໆ.

# ຜົນກະທົບຈາກການນຳໃຊ້ສານເຄມີໃນວຽກງານກະສິກຳ ແລະ ວິທີຫຼຸດຜ່ອນ



## ປີ ສະຫຼູ 11 ພະຈິກ November 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | 1 ຮ 12 ຄ ດ 12 | 2 ຮ 13 ຄ ດ 12 | 3 ຮ 14 ຄ ດ 12 | 4 ຮ 15 ຄ ດ 12 | 5 ຂ 1 ຄ ດ 1 | 6 ຂ 2 ຄ ດ 1 |
| 7 ຂ 3 ຄ ດ 1 | 8 ຂ 4 ຄ ດ 1 | 9 ຂ 5 ຄ ດ 1 | 10 ຂ 6 ຄ ດ 1 | 11 ຂ 7 ຄ ດ 1 | 12 ຂ 8 ຄ ດ 1 | 13 ຂ 9 ຄ ດ 1 |
| 14 ຂ 10 ຄ ດ 1 | 15 ຂ 11 ຄ ດ 1 | 16 ຂ 12 ຄ ດ 1 | 17 ຂ 13 ຄ ດ 1 | 18 ຂ 14 ຄ ດ 1 | 19 ຂ 15 ຄ ດ 1 | 20 ຮ 1 ຄ ດ 1 |
| 21 ຮ 2 ຄ ດ 1 | 22 ຮ 3 ຄ ດ 1 | 23 ຮ 4 ຄ ດ 1 | 24 ຮ 5 ຄ ດ 1 | 25 ຮ 6 ຄ ດ 1 | 26 ຮ 7 ຄ ດ 1 | 27 ຮ 8 ຄ ດ 1 |
| 28 ຮ 9 ຄ ດ 1 | 29 ຮ 10 ຄ ດ 1 | 30 ຮ 11 ຄ ດ 1 | | | | |

## ປີ ສະຫຼູ 12 ທັນວາ December 2021

| ອາທິດ SUNDAY | ຈັນ MONDAY | ອັງຄານ TUESDAY | ພຸດ WEDNESDAY | ພະຫັດ THURSDAY | ສຸກ FRIDAY | ເສົາ SATURDAY |
|---|---|---|---|---|---|---|
| | | | 1 ຮ 12 ຄ ດ 1 | 2 ຮ 13 ຄ ດ 1 | 3 ຮ 14 ຄ ດ 1 | 4 ຂ 1 ຄ ດ 2 |
| 5 ຂ 2 ຄ ດ 2 | 6 ຂ 3 ຄ ດ 2 | 7 ຂ 4 ຄ ດ 2 | 8 ຂ 5 ຄ ດ 2 | 9 ຂ 6 ຄ ດ 2 | 10 ຂ 7 ຄ ດ 2 | 11 ຂ 8 ຄ ດ 2 |
| 12 ຂ 9 ຄ ດ 2 | 13 ຂ 10 ຄ ດ 2 | 14 ຂ 11 ຄ ດ 2 | 15 ຂ 12 ຄ ດ 2 | 16 ຂ 13 ຄ ດ 2 | 17 ຂ 14 ຄ ດ 2 | 18 ຂ 15 ຄ ດ 2 |
| 19 ຮ 1 ຄ ດ 2 | 20 ຮ 2 ຄ ດ 2 | 21 ຮ 3 ຄ ດ 2 | 22 ຮ 4 ຄ ດ 2 | 23 ຮ 5 ຄ ດ 2 | 24 ຮ 6 ຄ ດ 2 | 25 ຮ 7 ຄ ດ 2 |
| 26 ຮ 8 ຄ ດ 2 | 27 ຮ 9 ຄ ດ 2 | 28 ຮ 10 ຄ ດ 2 | 29 ຮ 11 ຄ ດ 2 | 30 ຮ 12 ຄ ດ 2 | 31 ຮ 13 ຄ ດ 2 | |

1 ວັນທີ່ດິນໂລກ
2 ວັນສະຖາປະນາ ສປປ ລາວ
13 ວັນຄ້າຍວັນເກີດ ທ່ານປະທານ ໄກສອນ ພົມວິຫານ

**ເອກະສານອ້າງອີງ: ກົດໝາຍວ່າດ້ວຍ ການຄຸ້ມຄອງເຄມີ, ເລກທີ 25/ສພຊ, ລົງວັນທີ 10 ພະຈິກ 2016**

**ມາດຕາ 6 ການມີສ່ວນຮ່ວມຂອງສັງຄົມ ແລະ ປະຊາຊົນ**

ເພື່ອຮັບປະກັນໃນການຄຸ້ມຄອງການດຳເນີນທຸລະກິດ ແລະ ການນຳໃຊ້ເຄມີ ໃຫ້ມີຄວາມປອດໄພຕໍ່ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມນັ້ນ ສັງຄົມ ແລະ ປະຊາຊົນ ຕ້ອງມີສ່ວນຮ່ວມ ດັ່ງນີ້:

1. ຮັບຮູ້ ແລະ ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບຄວາມເປັນອັນຕະລາຍ ແລະ ຄວາມປອດໄພຂອງເຄມີ;
2. ຕິດຕາມ ແລະ ແຈ້ງຂໍ້ມູນຂ່າວສານ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງກັບຄວາມສ່ຽງ ແລະ ຜົນກະທົບຈາກການດຳເນີນທຸລະກິດ ແລະ ການນຳໃຊ້ເຄມີ;
3. ປ້ອງກັນ, ສະກັດກັ້ນ ຜົນກະທົບຈາກການດຳເນີນທຸລະກິດ ແລະ ການນຳໃຊ້ເຄມີ.

**ມາດຕາ 23 (ວັກ 1) ການບຳບັດ ແລະ ການກຳຈັດສິ່ງເສດເຫຼືອເຄມີ**

ສິ່ງເສດເຫຼືອເຄມີຈາກການດຳເນີນທຸລະກິດ ແລະ ການນຳໃຊ້ ຕ້ອງບຳບັດ ຫຼື ກຳຈັດໂດຍທັນທີ, ໃນກໍລະນີທີ່ບໍ່ສາມາດບຳບັດ ຫຼື ກຳຈັດໄດ້ນັ້ນ ກໍສາມາດເກັບຮັກສາໄວ້ແຕ່ສູງສຸດບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ມີສິ່ງເສດເຫຼືອ ແລະ ຕ້ອງແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 52 ພັນທະຂອງຜູ້ນຳໃຊ້ເຄມີ**

ຜູ້ນຳໃຊ້ເຄມີ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວຂ້ອງກັບເຄມີຢ່າງເຂັ້ມງວດ;
2. ບຳບັດ ແລະ ກຳຈັດສິ່ງເສດເຫຼືອຈາກການນຳໃຊ້ເຄມີ ໃຫ້ຖືກຕ້ອງຕາມເຕັກນິກ ແລະ ມາດຕະຖານຄວາມປອດໄພ;
3. ລາຍງານ ກ່ຽວກັບຄວາມເປັນອັນຕະລາຍຈາກການນຳໃຊ້ສານເຄມີ ຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບບ່ອນນຳໃຊ້ເຄມີ;
4. ເຂົ້າຮ່ວມຂະບວນການຮັກສາສຸຂະພາບ ແລະ ປົກປັກຮັກສາສິ່ງແວດລ້ອມ;
5. ຮັບຜິດຊອບຕໍ່ຜົນກະທົບຈາກການນຳໃຊ້ສານເຄມີຂອງຕົນ.

**ມາດຕາ 53 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບເຄມີ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂັດຂວາງການເຄື່ອນໄຫວວຽກງານເຄມີຂອງເຈົ້າໜ້າທີ່;
3. ຈູດ, ຝັງ, ຖິ້ມ ແລະ ປ່ອຍເຄມີ ຫຼື ສິ່ງເສດເຫຼືອເຄມີ ສູ່ສິ່ງແວດລ້ອມ ແລະ ສັງຄົມ ໂດຍບໍ່ຖືກຕ້ອງຕາມເຕັກນິກ;
4. ນຳໃຊ້ຜະລິດຕະພັນເຄມີປອມ, ເຄມີບໍ່ໄດ້ມາດຕະຖານ, ເຄມີເສຍຄຸນນະພາບ ແລະ ເຄມີບໍ່ໄດ້ຂຶ້ນທະບຽນ.

**ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເລກທີ 21/ລບ, ລົງວັນທີ 30 ມັງກອນ 2019**

**ມາດຕາ 40 (ໃໝ່) ພັນທະຂອງຜູ້ປະກອບການ ຕໍ່ສານເຄມີເປັນພິດ ແລະ ສິ່ງເສດເຫຼືອ**

ຜູ້ປະກອບການມີພັນທະກໍ່ສ້າງ, ຕິດຕັ້ງເຄື່ອງວັດແທກ, ເຄື່ອງຄວບຄຸມມົນລະພິດເພື່ອຕິດຕາມ ລວມທັງຕິດຕັ້ງລະບົບບຳບັດ, ຖິ້ມ, ຈູດ, ເຜົາ, ຝັງ ຫຼື ທຳລາຍ ຕາມວິທີການ, ເຕັກນິກ ແລະ ໃນເຂດ ທີ່ໄດ້ກຳນົດໄວ້ຕາມລະບຽບການ ແລະ ມີຄວາມຮັບຜິດຊອບ ໃນກໍລະນີສານເຄມີເປັນພິດ ຫຼື ສິ່ງເສດເຫຼືອ ຫາກສົ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ ໂດຍສະເພາະຂອງແມ່ ແລະ ເດັກ, ພືດ, ສັດ, ສິ່ງມີຊີວິດອື່ນ ແລະ ລະບົບນິເວດ.

ຜູ້ບໍລິໂພກ ມີຄວາມຮັບຜິດຊອບ ໃນການຄວບຄຸມສານເຄມີເປັນພິດ ແລະ ກຳຈັດສິ່ງເສດເຫຼືອ ທີ່ຕົນໄດ້ຄອບຄອງ ແລະ ນຳໃຊ້ໃນຄອບຄົວ ຢ່າງເໝາະສົມ.